ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ ໐໒ /ສປສສ

ນະຄອນຫຼວງວຽງຈັນ, ວັນທີ ໒໓..໐໑....2014

## ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ບັນດາປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານທຸກຂັ້ນ ໃນທົ່ວປະເທດ

ເລື່ອງ: ການກວດຄົ້ນກ່ອນການເຂົ້າຫ້ອງປະຊຸມສານ

ອີງຕາມ ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ມາດຕາ 172 ແລະ 173 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 218 ແລະ 220 ຂອງກົດໝາຍວ່າດ້ວຍການດຳນເນີຄະດີແພ່ງ ສະບັບປັບປຸງ ປີ 2012;

ໃນໄລຍະຜ່ານມາ ເຫັນວ່າ ການປະຕິບັດລະບຽບຂອງຫ້ອງປະຊຸມສານ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ຊຶ່ງອາດຈະເກີດບັນຫາທີ່ຕາມມາ. ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ, ໃນທີ່ປະຊຸມສານ ຕ້ອງມີການກວດຄົ້ນຫາຊັບສິ່ງຂອງທີ່ຕ້ອງຫ້າມ ກ່ອນຈະອະນຸຍາດໃຫ້ເຂົ້າຮ່ວມໃນທີ່ປະຊຸມສານ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳດັ່ງນີ້:

1. ໃຫ້ມີຜູ້ຮັບຜິດຊອບ ກວດຄົ້ນບັນດາຜູ້ທີ່ຈະເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອຊອກຫາວັດຖຸທີ່ຕ້ອງຫ້າມ ເປັນຕົ້ນ ອາວຸດ, ວັດຖຸທີ່ແຫຼມຄົມ, ທາດເຄມີ, ເຊື້ອໄຟ, ເຄື່ອງບັນທຶກ ພາບ, ສຽງ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບປະຊຸມສານ;
2. ຖ້າການກວດຄົ້ນ ຫາກພົບວັດຖຸສິ່ງຂອງ ທີ່ຕ້ອງຫ້າມ ໃຫ້ຜູ້ຮັບຜິດຊອບກວດຄົ້ນນັ້ນ ເກັບຮັກສາໄວ້ ພ້ອມທັງເຮັດບົດບັນທຶກມອບ-ຮັບ ເປັນສອງສະບັບ ໜຶ່ງສະບັບ ໃຫ້ຜູ້ກ່ຽວຂ້ອງ ແລະ ອີກສະບັບໜຶ່ງເກັບໄວ້ເປັນຫຼັກຖານ.

   ໃນກໍລະນີ ພົບເຫັນວັດຖຸສິ່ງຂອງ ທີ່ສົງໄສວ່າ ເປັນການຄອບຄອງທີ່ບໍ່ຖືກຕ້ອງ ໃຫ້ລາຍງານຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.
3. ຜູ້ທີ່ເຂົ້າຮ່ວມໃນທີ່ປະຊຸມສານ ຕ້ອງນຸ່ງຊຸດພົນລະເຮືອນ ແຕ່ໃນກໍລະນີໄດ້ໃສ່ເຄື່ອງແບບມາ ແລ້ວບໍ່ໃຫ້ຕິດເຄື່ອງໝາຍ ຫຼື ຍົດຊັ້ນ; ຍົກເວັ້ນ ເຈົ້າໜ້າທີ່ກ່ຽວຂ້ອງທີ່ໄດ້ຮັບອະນຸຍາດຈາກສານ;

4. ການກວດຄົ້ນ ຜູ້ທີ່ຈະເຂົ້າຮ່ວມປະຊຸມສານ ຕ້ອງໃຫ້ເປັນເພດດຽວກັນ ກັບຜູ້ຖືກກວດຄົ້ນ;
5. ຖ້າຜູ້ເຂົ້າຮ່ວມ ຫາກບໍ່ປະຕິບັດຕາມ ຄຳແນະນຳສະບັບນີ້ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມ ໃນທີ່ປະຊຸມສານ.

ເມື່ອໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປຄົ້ນຄວ້າ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດ ຖ້າມີບັນຫາໃດບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ລາຍງານໄປຍັງສານປະຊາຊົນສູງສຸດ ເພື່ອພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ (ເພື່ອລາຍງານ)
- ຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ເພື່ອຕິດຕາມກວດກາ)
- ບັນດາ ຫົວໜ້າຄະນະສານ, ກົງຈັກບໍລິຫານ ທີ່ກ່ຽວຂ້ອງຂອງສານປະຊາຊົນສູງສຸດ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ)
- ບັນດາ ປະທານສານປະຊາຊົນທ້ອງຖິ່ນ ແລະ ຫົວໜ້າສານທະຫານທຸກຂັ້ນ (ເພື່ອຈັດຕັ້ງປະຕິບັດ)
- ສຳເນົາໄວ້ 2 ສະບັບ.